# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການລ້ຽງໝູ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ໄມຈັນ ສໍອິນທະວົງ

ຂໍ້ມູນຈາກ: ບ້ານ ໂພນທອງ ເມືອງ ນາຊາຍທອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການລ້ຽງໝູ

ຮິບໂຮມ ແລະຈັດໜ້າໂດຍ: ນາງ ນ່າ ຄຳເຮືອງ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລົ່ງ ແສງດາລາ

ອ.ຈ ທອງຂັນ

ແຕ້ມໂດຍ: ທ້າວ ສົມເພັດ ຈັນທະລາ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນແລະ
ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາຂອງກາສລ້ຽງໝູ

ປະຊາຊົນບັນດາເຜົ່າຢູ່ໃນປະເທດເຮົາມີການທຳມາຫາກິນ ແຕກຕ່າງກັນໃນນັ້ນການລ້ຽງໝູກໍເປັນອາຊີບໜຶ່ງທີ່ສຳຄັນເພາະ ວ່າການລ້ຽງ ໝູກໍເປັນວຽກໜຶ່ງທີ່ງ່າຍ ເພາະອາຫານຂອງມັນກໍບໍ່ຍາກ ປານໃດມີແຕ່ ຮຳ ແລະເສດອາຫານເທົ່ານັ້ນໃນປັດຈຸບັນ ເພິ່ນໄດ້ ລ້ຽງໝູແບບເປັນຟາມເພິ່ນໃດ້ນຳໃຊ້ວິທະຍາສາດເຂົ້ານຳຄື ອາຫານ ສ່ວນຫຼາຍແມ່ນໃຊ້ຫົວອາຫານ ເພື່ອເລັ່ງໃຫ້ມັນໃຫຍ່ໄວເພື່ອຕອບ ສະໜອງຄວາມຕ້ອງ ການຂອງພໍ່ຄ້າ ແລະແມ່ຄ້າໃນທ້ອງຕະຫລາດ.

## ອຸປະກອນການລ້ຽງໝູ

ຄອກໝູ



PDF created with pdfFactory Pro trial version www.pdffactory.com

ຮາງໃສ່ອາຫານ



ຮາງໃສ່ນ້ຳ



ຮາງອາຫານໝູ



PDF created with pdfFactory Pro trial version www.pdffactory.com

ໝໍ້ຕົ້ມເຂົ້າໝູ



## ວິທີການລ້ຽງໝູ

ການລ້ຽງໝູອາດຈະມີຫຼາຍຂັ້ນຕອນຄື:

ພວກເຮົາຕ້ອງກະກຽມສະຖານທີ່ ແລະອຸປະກອນໃນການເຮັດທີ່ຢູ່ອາໄສຂອງມັນ ແລ້ວກໍຊອກຫາຊື້ໝູມາ ແລະກະກຽມອາຫານການກິນຂອງມັນໄວ້ໃຫ້ພຽງພໍອາຫານຕົ້ນຕໍກໍແມ່ນຮຳ ແລະພືດຜັກຢູ່ຕາມບ້ານ.

## ຄຸນປະໂຫຍດຂອງການລ້ຽງໝູ

ໝູເປັນສັດຊະນິດໜຶ່ງທີ່ປະຊາຊົນເຄີຍນິຍົມລ້ຽງເພາະວ່າການລ້ຽງໝູກໍແມ່ນໃຫ້ປະໂຫຍດແກ່ຄົນເຮົາຫຼາຍ. ຊີ້ນຂອງມັນກໍເປັນອາຫານ ນອກຈາກນັ້ນຖ້າພວກເຮົາລ້ຽງຫຼາຍກໍສາມາດນຳໄປຂາຍເພື່ອນຳລາຍໄດ້ເຂົ້າສູ່ຄອບຄົວເພື່ອແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ.

PDF created with pdfFactory Pro trial version www.pdffactory.com

## ກາບ: ການລ້ຽງໝູ

ການລ້ຽງໝູ ເຊີດຊູຊີວິດ
ເຮົາຮ່ວມຈິດ ຊີວິດສົດໃສ
ຢ່າຫ່າງໄກ ການພັດທະນາ
ຊ່ວຍຮັກສາ ໝັ້ນພຽນຕະຫຼອດ
ໃຫ້ມັນປອດ ພະຍາດທຸກຢ່າງ
ພ້ອມກັນສ້າງ ຈຶ່ງຄ່ອຍຈະເລີນ
ພ້ອມກັນເດີນ ບ້ານເຮົາຈຶ່ງຮຸ່ງ
ໃຫ້ຮຸ່ງຄືໄໝ ໃຫ້ໃສຄືແກ້ວ

## ເຊີ້ງ: ຮ່ວມໃຈ

ເຮີ້ຍມາເຮົາມາ ພວກເຮົາປະຊາ
ພ້ອມພັດທະນາ ສ້າງສາຄອບຄົວ
ຢ່າໄດ້ຢ້ານກົວ ໃນການລ້ຽງໝູ
ພ້ອມກັນເຊີດຊູ ດູແລທຸກຢ່າງ
ຢ່າໄດ້ຢູ່ຫ່າງ ໃນການຮັກສາ
ເພາະມັນເກີດມາ ຮັບໃຊ້ຊີວິດ
ພ້ອມກັບເພື່ອນມິດ ຊີວິດສົດໃສ
ຢ່າໄດ້ລາໄລ ຮ່ວມໃຈກັນເດີ

PDF created with pdfFactory Pro trial version www.pdffactory.com

## ເພງ: ການລ້ຽງໝູ

| | |
|---|---|
| ປ້າມີ | ເປັນຄົນລ້ຽງໝູ |
| ສ່ວນປ້າພູ | ເປັນຄົນລ້ຽງແບ້ |
| ເຊີນເດີ | ມາຢາມມາແວ່(*2) |
| ເວົ້າແທ້ໆ | ມາຊ້າເສຍໃຈປ*2) |

## ລຳ: ໝູຂອງເຮົາ

| | |
|---|---|
| ເອົາມາ.....ມາ...ມາ | ( ຊໍ້າ ) |
| ພ້ອມກັນພັດທະນາ | ສ້າງສາບ້ານເມືອງ |
| ບ້ານເຮົາຈະເລີນຮຸ່ງເຮືອງ | ຊ່ວຍກັນສຶກສາເດີໝູ່ |
| ຊີວິດໃນການລ້ຽງໝູ | ພາໃຫ້ເຊີດຊູຊີວິດ |
| ພວກເຮົາພ້ອມກັນຮ່ວມຈິດ | ພາໃຫ້ຊີວິດກ້າວໄປ |
| ພ້ອມກັນຮ່ວມໃຈ | ພັດທະນາເດີໝູ່ |
| ຊ່ວຍກັນເຊີດຊູ | ໃຫ້ມີນໍ້າໃຈ |
| ພ້ອມກັນກ້າວໄປ | ບ້ານເຮົາຈຶ່ງຈະເລີນ (ຊໍ້າ) |

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ທ. ໄມຈັນ ນາມສະກຸນ. ສໍອິນທະວົງ

ອາຍຸ 44 ປີ, ອາຊີບ.ພະນັກງານຄູ

**ເຫດຜົນຂອງການຂຽນປຶ້ມນີ້:**

ເພື່ອໃຫ້ຮູ້ວ່າອາຊີບຂອງຄົນເຮົາອາດຈະແຕກຕ່າງກັນ ບາງຄົນກໍເຮັດໄຮ່ເຮັດນາ, ບາງຄົນກໍເຮັດພໍ່ຄ້າຊາວຂາຍ ແລະບາງຄົນກໍລ້ຽງສັດ.

ໃນນັ້ນການລ້ຽງໝູກໍແມ່ນອາຊີບໜຶ່ງທີ່ສຳຄັນໃນປະເທດເຮົາ ດັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ຂຽນຫົວຂໍ້ນີ້ຂຶ້ນມາເພື່ອໃຫ້ເດັກນ້ອຍຮູ້ຈັກເຖິງຄວາມສຳຄັນກ່ຽວກັບການລ້ຽງໝູຢູ່ໃນບ້ານເຮົາ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com